ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0176 /ທຄຕລ ...2023...
ນະຄອນຫຼວງວຽງຈັນ, ວັນທີ: .......16 JAN 2023.......

## ໜັງສືແຈ້ງເຊີນ

## ຄັດເລືອກບໍລິສັດກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດກວດສອບ ເພື່ອເຂົ້າຮ່ວມສະເໜີລາຄາ ຄ່າບໍລິການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2023, ໂດຍອະນຸຍາດໃຫ້ທຸກໆບໍລິສັດກວດສອບ ທີ່ມີຄຸນນະວຸດທິເໝາະສົມ ແລະ ຄົບເງື່ອນໄຂ ເຂົ້າຮ່ວມ ດັ່ງນີ້:

- ເປັນບໍລິສັດທີ່ໄດ້ມາດຕະຖານ ແລະ ເປັນທີ່ຍອມຮັບຂອງສາກົນ.
- ມີໃບອະນຸຍາດດຳເນີນທຸລະກິດຢູ່ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ.
- ໄດ້ຮັບການອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃຫ້ສາມາດກວດສອບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ເງື່ອນໄຂຂອງບໍລິສັດກວດສອບ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

**ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດບໍລິສັດ ກວດສອບ, ຕ້ອງມີວິຊາການສະເພາະ ແລະ ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021.
2. ບໍລິສັດກວດສອບທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂຄົບຖ້ວນຕາມທີ່ລະບຸໄວ້ຂ້າງເທິງສາມາດ ເຂົ້າມາພິວພັນເອົາຂໍ້ມູນ (TOR) ໄດ້ທີ່ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C, ຫ້ອງຂາອອກ-ຂາເຂົ້າ, ເລີ່ມແຕ່ວັນທີ 16/01/2023 ຫາວັນທີ 20/01/2023 ເວລາ 08:30 ໂມງ ຫາເວລາ 15:30 ໂມງ.
3. ກຳນົດຍື່ນຊອງລາຍລະອຽດໜ້າວຽກ ແລະ ຂໍ້ມູນຕ່າງໆ ແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 03/02/2023 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

**ເອກະສານຊອງທີ 2 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນວັນພະທັດ ວັນທີ 09/02/2023 ເວລາ 09:00 ໂມງ ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.

3. ຜູ້ສະໜອງຕ້ອງລະບຸລາຍລະອຽດ, ເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ແລະ ໜັງສືຄ້ຳປະກັນດັ່ງກ່າວຕ້ອງອອກໂດຍທະນາຄານພາຍໃນປະເທດລາວ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 09/03/2023) ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ **<u>ໝາຍເຫດ:</u>**

- ທຄຕລ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ບໍລິການທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.
- ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ບໍລິສັດຜູ້ບໍລິການທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ຊະນະການປະມູນຕ້ອງໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ການຊຳລະຄ່າບໍລິການຈະຈ່າຍເປັນງວດ ອີງຕາມໜ້າວຽກທີ່ສຳເລັດ ພາຍຫຼັງການໃຫ້ບໍລິການແຕ່ລະຄັ້ງ ແລະ ໄດ້ຮັບການຢັ້ງຢືນຈາກ ທຄຕລ.

**<u>ຜູ້ອຳນວຍການ</u>**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

**ສອບຖາມຂໍ້ມູນເພີ່ມເຕີມ:**
**ທ່ານ ນ. ມາລິຕາ ຈຳລອງເພັດ ໂທ 02056796265**

## **(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)**

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ ທີ່ເຄີຍບໍລິການໃຫ້ແກ່ ທະນາຄານ | ໜ້າວຽກ | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015 ) | .... ປີ | (ໃຫ້ລະບຸ) | (ຕາມ ທຄຕລ ກຳນົດ) | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: